ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 012 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 04.02.2015.

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ

---

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 08/ສພຊ ລົງວັນທີ 21 ກໍລະກົດ 2014;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 032/ຄປຈ ລົງວັນທີ 22 ສິງຫາ 2014.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :**

**ມາດຕາ 1.** ປະກາດໃຊ້ກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ.

**ມາດຕາ 3.** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 08 /ສພຊ

# ມະຕິຕົກລົງ

## ຂອງ

## ສະພາແຫ່ງຊາດ ແຫ່ງ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ໃນວາລະກອງປະຊຸມຕອນບ່າຍ ຂອງວັນທີ 21 ກໍລະກົດ 2014

### ກອງປະຊຸມໄດ້ຕົກລົງ:

**ມາດຕາ 1** ຮັບຮອງເອົາກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ດ້ວຍຄະແນນສຽງ ເຫັນດີເປັນສ່ວນຫຼາຍ.

**ມາດຕາ 2** ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 21 ກໍລະກົດ 2014

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------------

ສະພາແຫ່ງຊາດ ເລກທີ 50 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 21 ກໍລະກົດ 2014

# ກົດໝາຍ
# ວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກໍານົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິພາບ ແນໃສ່ຕ້ານ, ສະກັດກັ້ນ, ຈໍາກັດ ແລະ ກໍາຈັດການກະທໍາຜິດນັ້ນ, ເຮັດໃຫ້ລະບົບເສດຖະກິດ-ການເງິນ ມີຄວາມເຂັ້ມແຂງ, ໝັ້ນຄົງ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ, ເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 2 ການຟອກເງິນ**

ການຟອກເງິນ ແມ່ນ ການປ່ຽນຮູບ, ນໍາໃຊ້, ເຄື່ອນຍ້າຍ, ແລກປ່ຽນ, ໄດ້ມາ, ຄອບຄອງ, ໂອນກໍາມະສິດທີ່ແທ້ຈິງ ຂອງເງິນ ຫຼື ຊັບສິນອື່ນ ທີ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍທີ່ຮູ້, ໄດ້ຮູ້ ຫຼື ສົງໄສວ່າ ເງິນ ຫຼື ຊັບສິນນັ້ນ ມາຈາກການກະທໍາຜິດຕົ້ນ ເພື່ອປົກປິດ ຫຼື ຊຸກເຊື່ອງ ຄຸນລັກສະນະ, ທີ່ມາຂອງເງິນ, ທີ່ຕັ້ງ ຂອງຊັບສິນ ເພື່ອເຮັດໃຫ້ເງິນ ຫຼື ຊັບສິນດັ່ງກ່າວ ຖືກຕ້ອງຕາມກົດໝາຍ.

**ມາດຕາ 3 ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແມ່ນ ການເຄື່ອນໄຫວໂດຍເຈດຕະນາ ທັງທາງກົງ ແລະ ທາງອ້ອມ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ພະຍາຍາມໃຫ້, ຮິບໂຮມ, ຈັດຫາທຶນ ທີ່ຖືກຕ້ອງ ຫຼື ບໍ່ຖືກຕ້ອງ, ທັງໝົດ ຫຼື ບາງສ່ວນ ເພື່ອສະໜອງໃຫ້ແກ່ການກໍ່ການຮ້າຍ ຫຼື ຜູ້ກໍ່ການຮ້າຍ ຫຼື ການກະທຳທີ່ພົວພັນກັບການກໍ່ການຮ້າຍໂດຍສະເພາະ ເຖິງວ່າທຶນນັ້ນ ຈະຖືກນຳໃຊ້ ຫຼື ບໍ່ນຳໃຊ້ ເຂົ້າໃນການກະທຳຕົວຈິງກໍຕາມ.

**ມາດຕາ 4 ການຕ້ານ ສະກັດກັ້ນ ການຟອກເງິນ**

ການຕ້ານ ສະກັດກັ້ນ ການຟອກເງິນ ແມ່ນ ການເຄື່ອນໄຫວ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີໜ້າທີ່ໂດຍກົງໃນການຊອກຮູ້, ຕ້ານ, ສະກັດກັ້ນ, ຈຳກັດ ແລະ ກຳຈັດ ການຟອກເງິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດ ທີ່ເປັນອັນຕະລາຍຕໍ່ ຄວາມໝັ້ນຄົງຂອງຊາດ, ສ້າງຄວາມເສັຍຫາຍ ຕໍ່ພື້ນຖານເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 5 ການຕ້ານ ສະກັດກັ້ນ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ການຕ້ານ ສະກັດກັ້ນ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແມ່ນ ການເຄື່ອນໄຫວ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີໜ້າທີ່ໂດຍກົງໃນການຊອກຮູ້, ຕ້ານ, ສະກັດກັ້ນ, ຈຳກັດ ແລະ ກຳຈັດ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 3 ຂອງກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດ ທີ່ເປັນອັນຕະລາຍຕໍ່ລະບົບເສດຖະກິດ ແລະ ແຕະຕ້ອງເຖິງລະບອບການເມືອງຂອງຊາດ.

**ມາດຕາ 6 ການກະທຳທີ່ເປັນການຟອກເງິນ**

ການກະທຳທີ່ເປັນການຟອກເງິນ ມີ ດັ່ງນີ້:

1. ການປ່ຽນຮູບ, ການໂອນ ເງິນ ຫຼື ຊັບສິນອື່ນ ໂດຍມີຈຸດປະສົງປົກປິດ ຫຼື ເຊື່ອງອຳພົນຈາກການກະທຳຜິດຕົ້ນ, ໃຫ້ການຊ່ວຍເຫຼືອຜູ້ກະທຳຜິດຕົ້ນ ເພື່ອຫຼົບຫຼີກຈາກຜົນສະທ້ອນທາງດ້ານກົດໝາຍ;

2. ການປົກປິດ ຫຼື ເຊື່ອງອຳ ແຫຼ່ງ, ສະຖານທີ່, ການໂອນ, ການຄອບຄອງ, ການເຄື່ອນຍ້າຍ ຫຼື ຄວາມເປັນເຈົ້າຂອງ ຫຼື ສິດ ກ່ຽວກັບທຶນ;

3. ການໄດ້ມາ, ການຄອບຄອງ, ການນຳໃຊ້ທຶນ ທີ່ມາຈາກການກະທຳຜິດຕົ້ນ ເຊັ່ນ ການໃຫ້ກູ້ຢືມ ເງິນ ຫຼື ຊັບສິນອື່ນ, ການນຳໃຊ້ ເງິນ ຫຼື ຊັບສິນນັ້ນ ເຂົ້າໃສ່ການລົງທຶນໂດຍກົງ;

4. ການເຂົ້າຮ່ວມວາງແຜນ, ພະຍາຍາມ ຫຼື ຊ່ວຍເຫຼືອ, ສົ່ງເສີມ, ອຳນວຍຄວາມສະດວກ ຫຼື ໃຫ້ຄຳປຶກສາ ກ່ຽວກັບການກະທຳຜິດ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, 2 ແລະ 3 ເທິງນີ້.

ນອກຈາກນີ້ແລ້ວ ການຟອກເງິນ ຍັງສະແດງອອກ ດັ່ງນີ້:

1. ການຮັບຮູ້ໂດຍເຈດຕະນາກ່ຽວກັບການກະທຳຜິດ ທີ່ນຳໄປເຖິງການຟອກເງິນ;

2. ເຫດການ ຫຼື ຫຼັກຖານ ທີ່ຢັ້ງຢືນວ່າ ເງິນ ຫຼື ຊັບສິນນັ້ນ ໄດ້ມາຈາກການກະທຳຜິດຕົ້ນ ໂດຍບໍ່ຈຳເປັນມີການຕັດສິນຂອງສານ.

ນອກຈາກ ການດຳເນີນຄະດີຕໍ່ຜູ້ກະທຳຜິດໃນສະຖານການຟອກເງິນແລ້ວ ຍັງຕ້ອງດຳເນີນຄະດີຕໍ່ຜູ້ທີ່ມີການກະທຳຜິດຕົ້ນ ອີກດ້ວຍ.

**ມາດຕາ 7 ການກະທຳທີ່ເປັນການກໍ່ການຮ້າຍ**

ການກະທຳທີ່ເປັນການກໍ່ການຮ້າຍ ແມ່ນ ການກະທຳຂອງ ບຸກຄົນ, ກຸ່ມຄົນ, ການຈັດຕັ້ງ ຫຼື ອົງການກໍ່ການຮ້າຍ ໃນ ຫຼື ນອກດິນແດນ ສປປ ລາວ ທີ່ໄດ້ຮັບການສະໜອງທຶນໃຫ້ແກ່ການເຄື່ອນໄຫວກໍ່ການຮ້າຍ ມີ ດັ່ງນີ້:

1. ການກະທຳທີ່ ສ້າງຜົນສະທ້ອນຕໍ່ ຄວາມໝັ້ນຄົງ, ພື້ນຖານເສດຖະກິດ-ສັງຄົມຂອງຊາດ, ອົງການຈັດຕັ້ງຕ່າງປະເທດ, ອົງການສາກົນ, ສ້າງຄວາມຫຍຸ້ງຍາກຕໍ່ການພົວພັນສາກົນ ຂອງ ສປປ ລາວ ຫຼື ສ້າງຄວາມວຸ້ນວາຍ ໃຫ້ແກ່ປະຊາຊົນໃນສັງຄົມ;

2. ການກະທຳທີ່ແຕະຕ້ອງເຖິງ ຊີວິດ, ສຸຂະພາບ, ສິດເສລີພາບ ຫຼື ການບັງຄັບ, ການນາບຂູ່ທາງດ້ານຮ່າງກາຍ ແລະ ຈິດໃຈ;

3. ການ ຍຶດ, ທຳລາຍຊັບສິນ, ບຸກລຸກ, ໂຈມຕີ, ຂັດຂວາງ, ສ້າງຄວາມເສັຍຫາຍ ແລະ ສ້າງຄວາມວຸ້ນວາຍໃຫ້ແກ່ລະບົບຄອມພິວເຕີ, ລະບົບຄົມມະນາຄົມ, ລະບົບອິນເຕີເນັດ ຫຼື ເຄື່ອງມືດີຈິຕອນ ຂອງອົງການຈັດຕັ້ງລັດ, ນິຕິບຸກຄົນ, ການຈັດຕັ້ງ ແລະ ບຸກຄົນ;

4. ການ ປຸງແຕ່ງ, ຜະລິດ, ນຳໃຊ້, ບັນຈຸ, ຂົນສົ່ງ, ຮັບໂອນ, ຈັດຫາວັດຖຸລະເບີດ, ສານກຳມັນຕະພາບລັງສີ, ສານພິດ, ວັດຖຸໄວໄຟ ແລະ ຊື້-ຂາຍອາວຸດ, ອຸປະກອນ, ຍານພາຫະນະ ລວມທັງການແນະນຳ ໃຫ້ກະທຳການໃດໜຶ່ງ ໂດຍມີຈຸດປະສົງຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 1, 2 ແລະ 3 ຂອງມາດຕານີ້;

5. ການ ເຜີຍແຜ່, ຊັກຊວນ, ຊຸກຍູ້, ບັງຄັບ, ນາບຂູ່, ວ່າຈ້າງ ຫຼື ສ້າງເງື່ອນໄຂ, ຊ່ວຍເຫຼືອໃຫ້ມີການກະທຳ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 1, 2, 3, 4, 7 ແລະ 8 ຂອງມາດຕານີ້;

6. ການ ຈັດຕັ້ງ, ໃຫ້ທຶນ, ເຂົ້າຮ່ວມ ແລະ ພະຍາຍາມເຂົ້າຮ່ວມການຈັດຕັ້ງ, ສິດສອນ, ຝຶກອົບຮົມ ຫຼື ທັດແອບ ເປົ້າໝາຍ ເພື່ອມີການກະທຳ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 1, 2, 3, 4, 5, 7 ແລະ 8 ຂອງມາດຕານີ້;

7. ການຮັບຮູ້ການກະທຳທີ່ມີຫຼັກຖານຢັ້ງຢືນຢ່າງພາວະວິໄສ ວ່າເປັນການກໍ່ການຮ້າຍ;

8. ການກະທຳຜິດອື່ນ ທີ່ຖືວ່າເປັນການກໍ່ການຮ້າຍ ຕາມທີ່ໄດ້ກຳນົດໄວ້ໃນສັນຍາສາກົນ ຫຼື ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 8 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການກະທຳຜິດຕົ້ນ** ໝາຍເຖິງ ການກະທຳຜິດທາງອາຍາ ທັງໝົດ ຊຶ່ງເປັນຕົ້ນເຫດຂອງການຟອກເງິນ ລວມທັງການກະທຳຜິດນອກດິນແດນ ສປປ ລາວ ທີ່ກໍ່ໃຫ້ເກີດມີຜົນຈາກການກະທຳຜິດຕົ້ນ ມີຄື ການສໍ້ໂກງຊັບ; ການປຸ້ນຊັບ ຫຼື ການລັກຊັບ; ການຄາດຕະກຳ ແລະ ການທຳຮ້າຍຮ່າງກາຍ; ການລັກພາຕົວ, ການກັກຂັງ ແລະ ການຈັບເປັນຕົວປະກັນ; ການຊື້-ຂາຍຊັບທີ່ຜິດກົດໝາຍ; ການປອມແປງເງິນ ຫຼື ການໃຊ້ເງິນປອມ ລວມທັງການປອມແປງເຊັກ, ການໃຊ້ເຊັກ ຫຼື ພັນທະບັດປອມ; ການປອມແປງເອກະສານ ຫຼື ການໃຊ້ເອກະສານປອມ; ການລະເມີດຊັບສິນທາງປັນຍາ; ການສໍ້ລາດບັງຫຼວງ ລວມທັງການຮັບສິນບົນ ແລະ ການໃຫ້ສິນບົນ; ການຄ້າໂສເພນີ ຜູ້ໃຫຍ່ ແລະ ເດັກ; ການຄ້າມະນຸດ, ການຂົນຂວາຍສິ່ງຄົນອອກ ຫຼື ການເອົາຄົນເຂົ້າປະເທດ; ການຜະລິດ ແລະ ຄ້າຂາຍ ຢາເສບຕິດ; ການຊື້-ຂາຍ ອາວຸດເສິກ ຫຼື ວັດຖຸລະເບີດ; ການເຂົ້າຮ່ວມໃນກຸ່ມອົງການອາຊະຍາກຳ ແລະ ກຸ່ມຄົນທີ່ເກັບຄ່າຄຸ້ມຄອງ; ການກໍ່ການຮ້າຍ ລວມທັງການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ອາຊະຍາກຳທາງດ້ານສິ່ງແວດລ້ອມ; ອາຊະຍາກຳທາງດ້ານອາກອນ; ການຊື້-ຂາຍຂໍ້ມູນພາຍໃນ ແລະ ການປັ່ນຕະຫຼາດ; ການລະເມີດລະບຽບການກ່ຽວກັບລະບອບພາສີ, ອາກອນຂອງລັດ; ການບັງຄັບ ນາບຂູ່ເອົາຊັບ; ການເປັນໂຈນສະລັດ ແລະ ອື່ນໆ;

2. **ຜົນຈາກການກະທຳຜິດຕົ້ນ** ໝາຍເຖິງ ເງິນ ຫຼື ຊັບສິນທີ່ໄດ້ມາໂດຍທາງກົງ ຫຼື ທາງອ້ອມ ຈາກການກະທຳຜິດຕົ້ນ, ຊັບສິນທີ່ໄດ້ປ່ຽນຮູບ ຫຼື ປ່ຽນແປງທັງໝົດ ຫຼື ບາງສ່ວນ ໄປເປັນຊັບສິນອື່ນ ລວມທັງຜົນຕອບແທນຈາກການລົງທຶນ;

3. **ຜູ້ກໍ່ການຮ້າຍ** ໝາຍເຖິງ ບຸກຄົນ, ກຸ່ມຄົນ, ການຈັດຕັ້ງ ຫຼື ອົງການກໍ່ການຮ້າຍ ທີ່ມີການກະທຳຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງກົດໝາຍສະບັບນີ້;

4. **ອົງການກໍ່ການຮ້າຍ** ໝາຍເຖິງ ກຸ່ມກໍ່ການຮ້າຍໃດໜຶ່ງ ທີ່ມີເຈດຕະນາກະທຳ, ພະຍາຍາມກະທຳ, ມີສ່ວນຮ່ວມ, ຮ່ວມມືກະທຳຜິດ, ຈັດຕັ້ງ, ນຳພາເຄື່ອນໄຫວການກໍ່ການຮ້າຍທາງກົງ ຫຼື ທາງອ້ອມ ແລະ ມີການເຄື່ອນໄຫວກໍ່ການຮ້າຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງກົດໝາຍສະບັບນີ້;

5. **ທຶນ** ໝາຍເຖິງ ເງິນ ຫຼື ຊັບສິນ ທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ, ອະສັງຫາລິມະຊັບ ຫຼື ສັງຫາລິມະຊັບ ແລະ ທຸກເອກະສານ ຫຼື ເຄື່ອງມືທາງດ້ານການເງິນທຸກຮູບແບບ ທັງໃນຮູບແບບເອເລັກໂຕຣນິກ ຫຼື ດີຈີຕອນ, ໃບຢັ້ງຢືນກຳມະສິດ ຫຼື ຜົນປະໂຫຍດຈາກທຶນນັ້ນ;

6. **ທຶນທີ່ໄດ້ສະໜອງ** ໝາຍເຖິງ ທຶນ ທີ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສະໜອງ ຫຼື ນຳໃຊ້ເຂົ້າໃນການກໍ່ການຮ້າຍ;

7. **ສະຖາບັນການເງິນ** ໝາຍເຖິງ ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ, ບໍລິສັດ ໃຫ້ກູ້ຢືມ ແລະ ໃຫ້ສິນເຊື່ອທຸກປະເພດ, ໂຮງຊວດຈຳ, ບໍລິສັດເຊົ່າສິນເຊື່ອ, ບໍລິສັດຮັບບໍລິ

ການໂອນເງິນ, ຮ້ານແລກປ່ຽນເງິນຕາ, ບໍລິສັດປະກັນໄພ, ບໍລິສັດຫຼັກຊັບ, ບໍລິສັດບໍລິຫານ ຊັບສິນ ຫຼື ອື່ນໆ;

8. **ສະຖາບັນທີ່ບໍ່ນອນໃນຂະແໜງການເງິນ** ໝາຍເຖິງ ບໍລິສັດ ຫຼື ຕົວແທນຈຳໜ່າຍ ແລະ ບໍລິຫານເຄື່ອງມືການຊຳລະທາງດ້ານການເງິນ, ບໍລິສັດຕົວແທນຊື້-ຂາຍ ອະສັງຫາລິມະຊັບ, ທຸລະກິດ ຊື້-ຂາຍວັດຖຸມີຄ່າ ແລະ ເຄື່ອງເກົ່າ, ສະພາທະນາຍຄວາມ ຫຼື ວິສາຫະກິດກົດໝາຍ, ອົງການທະບຽນ ສານ, ບໍລິສັດກວດສອບບັນຊີ, ກາຊີໂນ ຫຼື ອື່ນໆ;

9. **ທຸລະກຳ** ໝາຍເຖິງ ການດຳເນີນກິດຈະກຳ ກ່ຽວກັບການເປີດບັນຊີ, ການຝາກເງິນ, ການຖອນເງິນ, ການໂອນເງິນ, ການແລກປ່ຽນເງິນຕາ, ການຊື້-ຂາຍວັດຖຸ, ສິນຄ້າ ຫຼື ການບໍລິການ ອື່ນ;

10. **ທຸລະກຳທີ່ສົງໄສ** ໝາຍເຖິງ ທຸລະກຳທີ່ບໍ່ສອດຄ່ອງກັບປະຫວັດ, ອາຊີບ ແລະ ຄວາມ ເປັນຈິງ ຂອງລູກຄ້າ;

11. **ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ** ໝາຍເຖິງ ບຸກຄົນຜູ້ເປັນເຈົ້າຂອງຜົນປະໂຫຍດສຸດທ້າຍ ທີ່ແທ້ຈິງ ຈາກການເຄື່ອນໄຫວທຸລະກິດ, ກິດຈະກຳ ຫຼື ທຸລະກຳ ໃດໜຶ່ງ ລວມທັງຜູ້ທີ່ມີອຳນາດ ໃນການຄວບຄຸມນິຕິບຸກຄົນ;

12. **ບຸກຄົນທີ່ມີສະຖານະພາບທາງການເມືອງ** ໝາຍເຖິງ ນັກການເມືອງຕ່າງປະເທດ, ພະນັກງານລັດ ແລະ ພະນັກງານອົງການຈັດຕັ້ງສາກົນ;

13. **ນັກການເມືອງຕ່າງປະເທດ** ໝາຍເຖິງ ຜູ້ທີ່ດຳລົງ ຫຼື ເຄີຍດຳລົງຕຳແໜ່ງ ຊຶ່ງໄດ້ຮັບ ຄວາມໄວ້ວາງໃຈ ແລະ ມີບົດບາດສຳຄັນ ຕໍ່ພາຍໃນ ແລະ ຕ່າງປະເທດ ລວມທັງສະມາຊິກຄອບຄົວ ຫຼື ບຸກຄົນທີ່ມີສາຍພົວພັນໃກ້ຊິດກັບບຸກຄົນດັ່ງກ່າວ;

14. **ພະນັກງານລັດ** ໝາຍເຖິງ ຜູ້ທີ່ດຳລົງ ຫຼື ເຄີຍດຳລົງຕຳແໜ່ງສຳຄັນ ຊຶ່ງໄດ້ຮັບຄວາມໄວ້ ວາງໃຈ ແລະ ມີບົດບາດໃນ ສປປ ລາວ ລວມທັງສະມາຊິກສະພາບໍລິຫານ, ຄະນະຜູ້ບໍລິຫານ ຂອງ ລັດວິສາຫະກິດ ຫຼື ລັດຮຸ້ນສ່ວນ ລວມທັງສະມາຊິກຄອບຄົວ ຫຼື ບຸກຄົນທີ່ມີສາຍພົວພັນໃກ້ຊິດກັບ ບຸກຄົນ ດັ່ງກ່າວ;

15. **ພະນັກງານອົງການຈັດຕັ້ງສາກົນ** ໝາຍເຖິງ ຜູ້ທີ່ດຳລົງ ຫຼື ເຄີຍດຳລົງຕຳແໜ່ງສະມາ ຊິກສະພາບໍລິຫານ, ຄະນະຜູ້ບໍລິຫານ ຊຶ່ງໄດ້ຮັບຄວາມໄວ້ວາງໃຈ ແລະ ມີບົດບາດ ຕໍ່ອົງການຈັດ ຕັ້ງສາກົນ ລວມທັງສະມາຊິກຄອບຄົວ ຫຼື ບຸກຄົນທີ່ມີສາຍພົວພັນໃກ້ຊິດກັບບຸກຄົນດັ່ງກ່າວ;

16. **ທະນາຄານທີ່ບໍ່ມີຕົວຕົນ** ໝາຍເຖິງ ທະນາຄານທີ່ບໍ່ມີທີ່ຕັ້ງສຳນັກງານ ຢ່າງເປັນຮູບປະ ທຳ ຢູ່ໃນປະເທດທີ່ອະນຸຍາດ ໃຫ້ດຳເນີນທຸລະກິດການທະນາຄານ ຫຼື ບໍ່ໄດ້ເປັນບໍລິສັດໃນກຸ່ມຂອງ ສະຖາບັນການເງິນໃດໜຶ່ງ ທີ່ຖືກຕ້ອງຕາມກົດໝາຍ;

17. **ອົງການທີ່ບໍ່ຫວັງຜົນກຳໄລ** ໝາຍເຖິງ ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຄື່ອນໄຫວກິດຈະ ກຳຕົ້ນຕໍ ເພື່ອການກຸສົນ, ສາສະໜາ, ວັດທະນະທຳ, ການສຶກສາ, ສິ່ງແວດລ້ອມ, ສາທາລະນະສຸກ,

ກິລາ-ກາຍຍະກຳ, ມະນຸດສະທຳ ແລະ ສັງຄົມສົງເຄາະການສົ່ງເສີມວິຊາຊີບຕ່າງໆ ໂດຍບໍ່ຫວັງຜົນຕອບແທນ;

18. **ທະນາຄານຕົວແທນ** ໝາຍເຖິງ ທະນາຄານຕາງໜ້າ ຫຼື ສື່ກາງໃນການຊຳລະສະສາງລະຫວ່າງທະນາຄານດ້ວຍກັນ ລວມທັງທະນາຄານ ຢູ່ ພາຍໃນ ແລະ ຕ່າງປະເທດ;

19. **ການໂອນເງິນ** ໝາຍເຖິງ ການເຮັດທຸລະກຳໃນນາມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍຜ່ານສະຖາບັນການເງິນໃດໜຶ່ງ ດ້ວຍວິທີການໂອນທາງເອເລັກໂຕຣນິກ ຊຶ່ງຈະເຮັດໃຫ້ຜູ້ທີ່ໄດ້ຮັບຜົນປະໂຫຍດ ສາມາດຮັບຈຳນວນເງິນ ຢູ່ສະຖາບັນການເງິນອື່ນໄດ້;

20. **ການຍຶດຊັບ** ໝາຍເຖິງ ການນຳເອົາ ຊັບສິນ ຫຼື ວັດຖຸສິ່ງຂອງເຄື່ອນທີ່ມາໄວ້ເປັນຂອງກາງ ຕາມຄຳສັ່ງຂອງອົງການທີ່ມີສິດອຳນາດກ່ຽວຂ້ອງ;

21. **ການອາຍັດຊັບ** ໝາຍເຖິງ ການບໍ່ອະນຸຍາດໃຫ້ມີ ການໂອນ, ມອບ, ຊື້-ຂາຍ, ແລກປ່ຽນ, ຊວດຈຳ, ຄ້ຳປະກັນ, ທຳລາຍ ຫຼື ປ່ຽນແປງ, ເຄື່ອນຍ້າຍ ຫຼື ເຄື່ອນໄຫວ ຂອງທຶນ, ຊັບຄົງທີ່ ຫຼື ຊັບເຄື່ອນທີ່ ລວມທັງບັນຊີເງິນຝາກຢູ່ທະນາຄານ ຕາມຄຳສັ່ງ ຂອງອົງການທີ່ມີສິດອຳນາດກ່ຽວຂ້ອງ;

22. **ການຮິບຊັບ** ໝາຍເຖິງ ການນຳເອົາຊັບສິນ ຫຼື ວັດຖຸສິ່ງຂອງ ທັງໝົດ ຫຼື ບາງສ່ວນທີ່ເປັນກຳມະສິດ ຂອງຜູ້ກະທຳຜິດມາເປັນຂອງລັດ ຕາມຄຳຕັດສິນຂອງສານ;

23. **ຍັດຕິຂອງສະພາຄວາມໝັ້ນຄົງ ອົງການສະຫະປະຊາຊາດ** ໝາຍເຖິງ ຍັດຕິກ່ຽວກັບບັນຊີລາຍຊື່ຂອງ ບຸກຄົນ, ກຸ່ມຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງກັບການກໍ່ການຮ້າຍສາກົນ ຕາມທີ່ໄດ້ກຳນົດໄວ້ໃນພາກທີ VII ຂອງຍັດຕິດັ່ງກ່າວ;

24. **ບັນຊີນິລະນາມ** ໝາຍເຖິງ ບັນຊີເງິນຝາກທີ່ມີຂໍ້ມູນບໍ່ກົງກັບ ຫຼື ບໍ່ຮູ້ ຜູ້ເຄື່ອນໄຫວບັນຊີ ເປັນຕົ້ນ ຊື່, ນາມສະກຸນ, ວັນ, ເດືອນ, ປີເກີດ, ທີ່ຢູ່, ອາຍຸ, ອາຊີບ;

25. **ລູກຄ້າ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໃຊ້ການບໍລິການຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ;

26. **ເຄື່ອງມືທາງດ້ານການເງິນ ໝາຍເຖິງ** ແຊັກທະນາຄານ, ແຊັກເດີນທາງ, ແຊັກສັ່ງຈ່າຍ, ພັນທະບັດ, ດຣາບ (Bank Draft) ແລະ ອື່ນໆ;

27. **ກຸ່ມຄົນທີ່ເກັບຄ່າຄຸ້ມຄອງ ໝາຍເຖິງ** ກຸ່ມຄົນ ທີ່ນຳໃຊ້ສິດບັງຄັບ ນາບຂູ່ ເພື່ອຮຽກເອົາເງິນ ຫຼື ຊັບສິນອື່ນ ຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

28. **ອາຊະຍາກຳທາງດ້ານສິ່ງແວດລ້ອມ ໝາຍເຖິງ** ການກະທຳຜິດທີ່ກໍ່ຄວາມເສັຍຫາຍຢ່າງຮ້າຍແຮງໃຫ້ແກ່ສິ່ງແວດລ້ອມ ເປັນຕົ້ນ ການລັກລອບຊື້-ຂາຍສັດນ້ຳ ສັດປ່າທີ່ຫວງຫ້າມ, ການຂຸດຄົ້ນຊັບພະຍາກອນທຳມະຊາດ, ການຕັດໄມ້ທຳລາຍປ່າ, ການທຳລາຍພືນລະປູກ, ການລ້າເນື້ອ, ການຫາປາ ຫຼື ສັດນ້ຳອື່ນ ໂດຍບໍ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 9 ນະໂຍບາຍກ່ຽວກັບວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ລັດ ຊຸກຍູ້, ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທຸກພາກສ່ວນ ເຂົ້າຮ່ວມໃນການເຄື່ອນໄຫວຕ້ານ ແລະ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ ແກ່ການກໍ່ການຮ້າຍ.

ລັດ ເອົາໃຈໃສ່ໂຄສະນາ, ສຶກສາອົບຮົມທົ່ວປວງຊົນດ້ວຍຫຼາຍຮູບການ ເພື່ອສ້າງຈິດສຳນຶກໃຫ້ສັງຄົມເຫັນໄດ້ຜົນຮ້າຍຂອງການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ກໍ່ຄວາມເສັຍຫາຍຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ລະບົບເສດຖະກິດຂອງຊາດ, ພາກພື້ນ ແລະ ສາກົນ.

ລັດ ຊຸກຍູ້ສົ່ງເສີມວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ດ້ວຍການສະໜອງງົບປະມານ, ບຸກຄະລາກອນ, ພາຫະນະ ແລະ ວັດຖຸປະກອນເຕັກນິກທີ່ທັນສະໄໝ ໃຫ້ແກ່ອົງການທີ່ມີສິດກ່ຽວຂ້ອງໃນການເຄື່ອນໄຫວວຽກງານຂອງຕົນຢ່າງມີປະສິດທິພາບ.

**ມາດຕາ 10 ຫຼັກການກ່ຽວກັບວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ປະຕິບັດຕາມ ຫຼັກການພື້ນຕໍ່ ດັ່ງນີ້:

1. ຮັບປະກັນ ອຳນາດອະທິປະໄຕ, ຄວາມໝັ້ນຄົງ, ຄວາມສະຫງົບປອດໄພ ແລະ ການເຄື່ອນໄຫວທາງດ້ານເສດຖະກິດ-ສັງຄົມ ຂອງຊາດ ໃຫ້ເປັນປົກກະຕິ;

2. ຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

3. ຕ້ານທຸກປາກົດການສວຍໃຊ້ສິດອຳນາດ, ໃຊ້ອຳນາດເກີນຂອບເຂດ ທີ່ສ້າງຄວາມເສັຍຫາຍ ໃຫ້ແກ່ສິດ ແລະ ຜົນປະໂຫຍດອັນຊອບທຳຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

4. ຮັບປະກັນຄວາມສອດຄ່ອງກັບກົດໝາຍ, ລະບຽບການ, ສັນຍາສາກົນ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

**ມາດຕາ 11 ການປົກປ້ອງ**

ພະນັກງານ ແລະ ເຈົ້າໜ້າທີ່ ທີ່ເຮັດວຽກກ່ຽວກັບການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ລວມທັງຜູ້ເຂົ້າຮ່ວມໃນວຽກງານດັ່ງກ່າວ ເຊັ່ນ ຜູ້ລາຍງານ, ຜູ້ປະກອບຂໍ້ມູນຂ່າວສານ, ພະຍານ, ຜູ້ຊ່ຽວຊານ ແລະ ຄອບຄົວຂອງພວກກ່ຽວ ຈະໄດ້ຮັບການປົກປ້ອງຕາມກົດໝາຍ ຈາກການແກ້ແຄ້ນ, ຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະລະພາບ ແລະ ການສ້າງຄວາມເສັຍຫາຍຕໍ່ ກຽດສັກສີ, ຊື່ສຽງ ຫຼື ຊັບສິນສ່ວນຕົວ.

**ມາດຕາ 12 ພັນທະໃນການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພັນທະໃນການສະໜອງຂໍ້ມູນ ແລະ ໃຫ້ການຮ່ວມມື ໃນການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

**ມາດຕາ 13 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ເຄື່ອນໄຫວ ແລະ ດຳເນີນທຸລະກຳ ຢູ່ ໃນ ແລະ ນອກດິນແດນ ສປປ ລາວ ທີ່ກ່ຽວຂ້ອງກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

**ມາດຕາ 14 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ການສຳມະນາ, ການຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາການ ແລະ ການຊ່ວຍເຫຼືອ ເພື່ອພັດທະນາວຽກງານດັ່ງກ່າວ, ປະຕິບັດສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ການເຄື່ອນໄຫວຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ

### ໝວດທີ 1
### ກິດຈະການເຄື່ອນໄຫວຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

**ມາດຕາ 15 ກິດຈະການເຄື່ອນໄຫວຕ້ານ ສະກັດກັ້ນ ການຟອກເງິນ**

ກິດຈະການເຄື່ອນໄຫວຕ້ານ ສະກັດກັ້ນ ການຟອກເງິນ ແມ່ນ ການເຄື່ອນໄຫວຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອ ຕ້ານ, ສະກັດກັ້ນ, ຈຳກັດ ແລະ ກຳຈັດ ພຶດຕິກຳທີ່ນຳເອົາ ເງິນ ຫຼື ຊັບສິນ ທີ່ບໍ່ຖືກຕ້ອງ ມາເຮັດໃຫ້ຖືກຕ້ອງຕາມກົດໝາຍ.

ກິດຈະການເຄື່ອນໄຫວລະອຽດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 16 ກິດຈະການເຄື່ອນໄຫວຕ້ານ ສະກັດກັ້ນ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ກິດຈະການເຄື່ອນໄຫວຕ້ານ ສະກັດກັ້ນ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແມ່ນ ການເຄື່ອນໄຫວຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອ ຕ້ານ, ສະກັດກັ້ນ, ຈຳກັດ ແລະ ກຳຈັດ ພຶດຕິກຳທີ່ເອົາທຶນ ສະໜອງໃຫ້ແກ່ການກໍ່ການຮ້າຍ.

ກິດຈະການເຄື່ອນໄຫວລະອຽດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 2
## ຫົວໜ່ວຍທີ່ມີໜ້າທີ່ລາຍງານ

**ມາດຕາ 17 ຫົວໜ່ວຍທີ່ມີໜ້າທີ່ລາຍງານ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ແມ່ນ ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີພັນທະລາຍງານຂໍ້ມູນ ຫຼື ການເຄື່ອນໄຫວທີ່ສົງໄສວ່າເປັນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕໍ່ສຳນັກງານຂໍ້ມູນຕ້ານການຟອກເງິນ.

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ມີ ຄື ສະຖາບັນການເງິນ ແລະ ສະຖາບັນທີ່ບໍ່ນອນໃນຂະແໜງການ ການເງິນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 6 ແລະ ຂໍ້ 7 ມາດຕາ 8 ຂອງກົດໝາຍສະບັບນີ້.

**ມາດຕາ 18 ສິດ ແລະ ພັນທະ ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ມີ ສິດ ແລະ ພັນທະ ດັ່ງນີ້:

1. ສ້າງແຜນງານ;
2. ປະຕິບັດຫຼັກການ ປະເມີນ ແລະ ບໍລິຫານ ຄວາມສ່ຽງ;
3. ຊອກຮູ້ລູກຄ້າ;
4. ເພີ່ມທະວີການເອົາໃຈໃສ່ລູກຄ້າ;
5. ເກັບກຳຂໍ້ມູນລະອຽດກ່ຽວກັບລູກຄ້າ;
6. ເກັບກຳຂໍ້ມູນກ່ຽວກັບທຸລະກຳຂອງລູກຄ້າ;
7. ພົວພັນກັບບຸກຄົນທີ່ມີສະຖານະພາບທາງການເມືອງ;
8. ພົວພັນກັບທະນາຄານຕົວແທນ;
9. ເກັບກຳຂໍ້ມູນການໂອນເງິນ;
10. ເກັບຮັກສາຂໍ້ມູນ;
11. ເລື່ອນທຸລະກຳ;
12. ລາຍງານ;
13. ລາຍງານທຸລະກຳທີ່ສົງໄສ;

14. ຮັກສາຄວາມລັບຂອງການລາຍງານ.

ສາຂາ ແລະ ບໍລິສັດໃນກຸ່ມຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ທີ່ຢູ່ຕ່າງປະເທດ ມີພັນທະປະຕິບັດຕາມມາດຕາ 19 ຫາ ມາດຕາ 32 ຂອງກົດໝາຍສະບັບນີ້.

ໃນກໍລະນີກົດໝາຍຂອງປະເທດທີ່ສາຂາ ແລະ ບໍລິສັດໃນກຸ່ມຂອງຕົນຕັ້ງຢູ່ນັ້ນ ຫາກບໍ່ອະນຸຍາດໃຫ້ປະຕິບັດພັນທະດັ່ງກ່າວ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງແຈ້ງໃຫ້ອົງການຄຸ້ມຄອງຂອງຕົນ.

**ມາດຕາ 19 ການສ້າງແຜນງານ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງສ້າງ ແລະ ຈັດຕັ້ງປະຕິບັດບັນດາແຜນງານ ເພື່ອການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ດັ່ງນີ້:

1. ນະໂຍບາຍ, ຂັ້ນຕອນການດຳເນີນງານ ແລະ ການຕິດຕາມກວດກາພາຍໃນ ຂັ້ນຕອນໃນການເລືອກເຟັ້ນຮັບເອົາພະນັກງານທີ່ໄດ້ມາດຕະຖານ;

2. ແຜນການຝຶກອົບຮົມໃຫ້ພະນັກງານ ແລະ ດຳເນີນການຝຶກອົບຮົມຢ່າງຕໍ່ເນື່ອງ;

3. ການກວດກາພາຍໃນ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;

4. ການປະເມີນຜົນການຈັດຕັ້ງປະຕິບັດວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງແຕ່ງຕັ້ງພະນັກງານເກັບກຳຂໍ້ມູນ ແລະ ລາຍງານ ໃນລະດັບຜູ້ບໍລິຫານ ຫຼື ພະນັກງານອາວຸໂສທີ່ມີຄຸນວຸດທິ, ປະສົບການກ່ຽວກັບວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເພື່ອຮັບຜິດຊອບວຽກງານທີ່ໄດ້ກຳນົດໄວ້ໃນວັກທີ ໜຶ່ງ ຂອງມາດຕານີ້ ພ້ອມທັງເປັນຜູ້ປະສານສົມທົບກັບສຳນັກງານຂໍ້ມູນຕ້ານການຟອກເງິນ.

**ມາດຕາ 20 ການປະຕິບັດຫຼັກການ ປະເມີນ ແລະ ບໍລິຫານ ຄວາມສ່ຽງ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງປະຕິບັດຫຼັກການ ປະເມີນ ແລະ ບໍລິຫານ ຄວາມສ່ຽງດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ດ້ວຍການກຳນົດ, ຕີລາຄາ, ຕິດຕາມ ແລະ ຫຼຸດຜ່ອນຄວາມສ່ຽງນັ້ນ.

ສຳລັບກົນໄກການປະຕິບັດຫຼັກການ ປະເມີນ ແລະ ບໍລິຫານ ຄວາມສ່ຽງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 21 ການຊອກຮູ້ລູກຄ້າ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງຊອກຮູ້ລູກຄ້າ ດ້ວຍການໃຫ້ລູກຄ້າ ແຈ້ງເອກະສານຢັ້ງຢືນຕົນ ເຊັ່ນ ບັດປະຈຳຕົວ, ປຶ້ມສຳມະໂນຄົວ, ໜັງສືຜ່ານແດນ, ໃບທະບຽນວິສາຫະກິດ ຫຼື ເອກະສານ

ທາງລັດຖະການອື່ນ ທີ່ສາມາດຢັ້ງຢືນກ່ຽວກັບລູກຄ້າ ຫຼື ຜູ້ທີ່ມາເຮັດທຸລະກຳແທນລູກຄ້າ ແລ້ວບັນທຶກຢ່າງຖືກຕ້ອງ, ສຳເນົາ ແລະ ເກັບຮັກສາໄວ້ເປັນຢ່າງດີ.

ສຳລັບກົນໄກການປະຕິບັດຫຼັກການຊອກຮູ້ລູກຄ້າ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 22 ການເພີ່ມທະວີການເອົາໃຈໃສ່ລູກຄ້າ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງເອົາໃຈໃສ່ລູກຄ້າ ໃນກໍລະນີ ດັ່ງນີ້:

1. ໃຫ້ການບໍລິການ ຫຼື ດຳເນີນທຸລະກຳກັບລູກຄ້າລາຍໃໝ່ຂອງຕົນ;
2. ເຮັດທຸລະກຳເປັນບາງຄັ້ງ, ຄັ້ງດຽວ ຫຼື ຫຼາຍຄັ້ງ ທີ່ມີລັກສະນະພາໃຫ້ສົງໄສ;
3. ມີທຸລະກຳທີ່ມີຄວາມສະຫຼັບສັບຊ້ອນ, ມີມູນຄ່າສູງ ແລະ ມີລັກສະນະຜິດປົກກະຕິ;
4. ມີທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
5. ມີຂໍ້ມູນໃນເອກະສານຢັ້ງຢືນກ່ຽວກັບລູກຄ້າ ບໍ່ຄົບຖ້ວນ ຫຼື ມີຂໍ້ສົງໄສວ່າບໍ່ຖືກຕ້ອງ.

ນອກຈາກນີ້ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງເອົາໃຈໃສ່ລູກຄ້າຢ່າງຕໍ່ເນື່ອງ ເພື່ອຮັບປະກັນວ່າ ຂໍ້ມູນທີ່ລູກຄ້າສະໜອງໃຫ້ໃນເມື່ອກ່ອນນັ້ນ ຖືກຕ້ອງກັບຄວາມເປັນຈິງໃນປັດຈຸບັນ ແລະ ຮັບປະກັນວ່າການດຳເນີນທຸລະກຳ ຂອງລູກຄ້າ ແມ່ນ ຖືກຕ້ອງ ແລະ ສອດຄ່ອງກັບປະຫວັດ, ການດຳເນີນທຸລະກິດ ຂອງຜູ້ກ່ຽວ ລວມທັງການຊອກຮູ້ທີ່ມາຂອງທຶນ ຖ້າຫາກຈຳເປັນ.

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງເອົາໃຈໃສ່ເປັນພິເສດຕໍ່ການພົວພັນທຸລະກິດ ຫຼື ເຮັດທຸລະກຳກັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ປະເທດທີ່ບໍ່ມີລະບຽບກົດໝາຍກ່ຽວກັບການຕ້ານສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຫຼື ມີ ແຕ່ຫາກການຈັດຕັ້ງປະຕິບັດລະບຽບກົດໝາຍດັ່ງກ່າວບໍ່ເຂັ້ມງວດ.

ກົນໄກສຳລັບການປະຕິບັດຫຼັກການເພີ່ມທະວີການເອົາໃຈໃສ່ລູກຄ້າ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 23 ການເກັບກຳຂໍ້ມູນລະອຽດກ່ຽວກັບລູກຄ້າ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງເກັບກຳ, ພິສູດ ແລະ ຢັ້ງຢືນຂໍ້ມູນກ່ຽວກັບລູກຄ້າ ທີ່ເປັນບຸກຄົນ ເຊັ່ນ ຊື່ ແລະ ນາມສະກຸນ, ວັນ, ເດືອນ, ປີເກີດ, ສັນຊາດ, ທີ່ຢູ່ ແລະ ອາຊີບ ຂອງລູກຄ້າ.

ສຳລັບລູກຄ້າທີ່ເປັນນິຕິບຸກຄົນນັ້ນ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງເກັບກຳ, ພິສູດ ແລະ ຢັ້ງຢືນ ຂໍ້ມູນກ່ຽວກັບຊື່ ແລະ ທີ່ຢູ່ຂອງບໍລິສັດ, ເອກະສານຢັ້ງຢືນຕົນຂອງຜູ້ອຳນວຍການ, ລາຍລະອຽດກ່ຽວກັບຜູ້ຖືຮຸ້ນ, ການເຄື່ອນໄຫວ ແລະ ຂະໜາດຂອງທຸລະກິດ.

ໃນກໍລະນີ ທີ່ບໍ່ສາມາດເກັບກຳຂໍ້ມູນລະອຽດກ່ຽວກັບລູກຄ້າຕາມທີ່ໄດ້ກຳນົດໄວ້ໃນວັກ ໜຶ່ງ ແລະ ສອງ ຂອງມາດຕານີ້ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງຢຸດການໃຫ້ບໍລິການ ຫຼື ບໍ່ສ້າງສາຍພົວພັນທຸລະກິດກັບລູກຄ້າຜູ້ນັ້ນ ແລະ ໃຫ້ຖືວ່າເປັນທຸລະກຳທີ່ສົງໄສ ແລ້ວລາຍງານ ຕໍ່ສຳນັກງານຂໍ້ມູນຕ້ານການຟອກເງິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 30 ແລະ 31 ຂອງກົດໝາຍສະບັບນີ້.

**ມາດຕາ 24 ການເກັບກຳຂໍ້ມູນກ່ຽວກັບທຸລະກຳຂອງລູກຄ້າ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງເກັບກຳຂໍ້ມູນກ່ຽວກັບຈຸດປະສົງ ແລະ ເປົ້າໝາຍຂອງລູກຄ້າໃນການໃຊ້ບໍລິການ ຫຼື ສ້າງສາຍພົວພັນທຸລະກິດກັບສະຖາບັນຂອງຕົນ.

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງຊອກຮູ້ວ່າການພົວພັນທຸລະກິດ ຂອງລູກຄ້ານັ້ນ ແມ່ນໃນນາມລູກຄ້າເອງ ຫຼື ຜູ້ອື່ນ ເພື່ອຊອກຮູ້ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ເຊັ່ນ ເຈົ້າຂອງທຶນ ລວມທັງທຶນທີ່ປະກອບເຂົ້າໃນການສ້າງຕັ້ງວິສາຫະກິດ ຊຶ່ງເປັນຕົ້ນກຳເນີດ ຫຼື ບຸກຄົນທີ່ມີສິດອຳນາດຕັດສິນບັນຫາ.

**ມາດຕາ 25 ການພົວພັນກັບບຸກຄົນທີ່ມີສະຖານະພາບທາງການເມືອງ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງມີລະບົບບໍລິຫານຄວາມສ່ຽງທີ່ເໝາະສົມ ເພື່ອຊອກຮູ້ວ່າລູກຄ້າ ຫຼື ຜູ້ໄດ້ຮັບຜົນປະໂຫຍດ ແມ່ນ ບຸກຄົນທີ່ມີສະຖານະພາບທາງການເມືອງ.

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ນອກຈາກປະຕິບັດຕາມ ມາດຕາ 19 ຫາ 32 ຂອງກົດໝາຍສະບັບນີ້ ຍັງຕ້ອງປະຕິບັດ ດັ່ງນີ້:

1. ລາຍງານຕໍ່ຄະນະອຳນວຍການ ຫຼື ຄະນະຜູ້ບໍລິຫານ ຂອງຕົນ ເພື່ອຂໍອະນຸຍາດກ່ອນເຮັດ ຫຼື ສືບຕໍ່ເຮັດທຸລະກິດ ຫຼື ທຸລະກຳ ກັບລູກຄ້າດັ່ງກ່າວ;
2. ນຳໃຊ້ມາດຕະການທີ່ເໝາະສົມ ເພື່ອຊອກຮູ້ທີ່ມາຂອງທຶນ;
3. ຕິດຕາມການພົວພັນທຸລະກິດ ແລະ ການເຮັດທຸລະກຳຂອງລູກຄ້າ ຢ່າງຕໍ່ເນື່ອງ.

**ມາດຕາ 26 ການພົວພັນກັບທະນາຄານຕົວແທນ**

ສະຖາບັນການເງິນ ທີ່ມີການພົວພັນທຸລະກິດກັບ ທະນາຄານຕົວແທນ ຫຼື ມີການພົວພັນອື່ນທີ່ຄ້າຍຄືກັນ ຕ້ອງປະຕິບັດ ດັ່ງນີ້:

1. ກວດກາຄືນ ຖານະນິຕິບຸກຄົນ ຂອງທະນາຄານຕົວແທນທີ່ຕົນພົວພັນທຸລະກິດນຳ;
2. ເກັບກຳຂໍ້ມູນ ຂ່າວສານ ກ່ຽວກັບລັກສະນະການດຳເນີນທຸລະກິດ ຂອງທະນາຄານຕົວແທນ;
3. ປະເມີນກ່ຽວກັບຄວາມເຊື່ອຖື ແລະ ການດຳເນີນວຽກງານຄຸ້ມຄອງ ແລະ ກວດກາຂອງທະນາຄານຕົວແທນ ໂດຍອີງໃສ່ຂໍ້ມູນທີ່ເປີດເຜີຍຕໍ່ມວນຊົນ;
4. ປະເມີນການຈັດຕັ້ງປະຕິບັດວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງທະນາຄານຕົວແທນ;
5. ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງໃນການເປີດສາຍພົວພັນທຸລະກິດ ກັບທະນາຄານຕົວແທນ.

ຖ້າວ່າ ທະນາຄານຕົວແທນ ຫາກມີການພົວພັນທຸລະກິດ ຫຼື ເຮັດທຸລະກຳກັບທະນາຄານທີ່ບໍ່ມີຕົວຕົນ ຫຼື ບໍລິສັດໃນກຸ່ມນັ້ນ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງບໍ່ສ້າງ ຫຼື ບໍ່ສືບຕໍ່ສາຍພົວພັນທຸລະກິດກັບທະນາຄານຕົວແທນ ຫຼື ບໍລິສັດ ໃນກຸ່ມດັ່ງກ່າວ.

## ມາດຕາ 27 ການເກັບກຳຂໍ້ມູນການໂອນເງິນ

ໃນການໃຫ້ບໍລິການກ່ຽວກັບການໂອນເງິນແຕ່ລະຄັ້ງ ສະຖາບັນການເງິນ ຕ້ອງເກັບກຳ ແລະ ກວດກາຂໍ້ມູນກ່ຽວກັບ ຊື່ ແລະ ນາມສະກຸນ, ທີ່ຢູ່, ເລກບັນຊີ ແລະ ຈຸດປະສົງການໂອນເງິນ ຂອງຜູ້ສັ່ງໂອນ.

ໃນກໍລະນີເຮັດໜ້າທີ່ເປັນສື່ກາງໃນການໂອນເງິນ ສະຖາບັນການເງິນ ຕ້ອງຮັບປະກັນວ່າ ຂໍ້ມູນຂອງຜູ້ສັ່ງໂອນ ແລະ ລາຍລະອຽດກ່ຽວກັບການໂອນເງິນ ໄດ້ເກັບກຳຢ່າງຖືກຕ້ອງ ແລະ ຄົບຖ້ວນ ກ່ອນນຳສົ່ງໃຫ້ຜູ້ໄດ້ຮັບຜົນປະໂຫຍດ.

ໃນກໍລະນີທີ່ ສະຖາບັນການເງິນ ໄດ້ຮັບເງິນໂອນ ຊຶ່ງບໍ່ມີຂໍ້ມູນ ຫຼື ຂາດຂໍ້ມູນໃດໜຶ່ງ ກ່ຽວກັບຜູ້ສັ່ງໂອນ ສະຖາບັນການເງິນດັ່ງກ່າວ ຕ້ອງກວດກາ ແລະ ຂໍອຂໍ້ມູນນັ້ນນຳສະຖາບັນທີ່ສັ່ງໂອນ ຫຼື ຜູ້ໄດ້ຮັບຜົນປະໂຫຍດ. ຖ້າຫາກບໍ່ໄດ້ຮັບການຕອບສະໜອງຂໍ້ມູນດັ່ງກ່າວ ສະຖາບັນການເງິນ ທີ່ໄດ້ຮັບເງິນໂອນນັ້ນ ຕ້ອງປະຕິເສດການເບີກຈ່າຍໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດ ແລ້ວໂອນເງິນກັບຄືນໃຫ້ສະຖາບັນທີ່ສັ່ງໂອນ ພ້ອມທັງລາຍງານໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນໃນທັນທີ.

ການຄຸ້ມຄອງການໂອນເງິນ ພາຍໃນ ແລະ ຕ່າງປະເທດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ມາດຕາ 28 ການເກັບຮັກສາຂໍ້ມູນ

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງເກັບຮັກສາຂໍ້ມູນກ່ຽວກັບລູກຄ້າ, ເອກະສານກ່ຽວກັບການພົວພັນທຸລະກິດ ແລະ ການເຮັດທຸລະກຳ ຂອງລູກຄ້າໄວ້ເປັນຢ່າງດີ ເພື່ອສະໜອງໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ແລະ ອົງການອື່ນທີ່ກ່ຽວຂ້ອງ.

ການເກັບຮັກສາຂໍ້ມູນ ໃຫ້ປະຕິບັດ ດັ່ງນີ້:

1. ສຳເນົາເອກະສານຢັ້ງຢືນກ່ຽວກັບລູກຄ້າ ແລະ ຜູ້ໄດ້ຮັບຜົນປະໂຫຍດຈາກການເຮັດທຸລະກຳໄວ້ຢ່າງໜ້ອຍ ສິບປີ ນັບແຕ່ວັນສິ້ນສຸດສາຍພົວພັນທຸລະກິດກັບລູກຄ້າ;
2. ຂໍ້ມູນທຸລະກຳທີ່ລູກຄ້າໄດ້ປະຕິບັດ ຕ້ອງເກັບຮັກສາໄວ້ຢ່າງໜ້ອຍ ຫ້າປີ ນັບແຕ່ວັນໄດ້ປະຕິບັດສຳເລັດ ເປັນຕົ້ນໄປ.

## ມາດຕາ 29 ການເລື່ອນທຸລະກຳ

ເມື່ອສົງໄສວ່າ ການດຳເນີນທຸລະກຳຂອງລູກຄ້າເປັນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຫົວໜ່ວຍທີ່ມີໜ້າທີ່ລາຍງານຕ້ອງເລື່ອນການດຳເນີນທຸລະກຳດັ່ງກ່າວ ອອກໄປພາຍໃນກຳນົດເວລາ ສາມວັນ ລັດຖະການ ຫຼັງຈາກນັ້ນ ຕ້ອງລາຍງານຕໍ່ສຳນັກງານຂໍ້ມູນຕ້ານການຟອກເງິນ ເພື່ອພິຈາລະນາ.

**ມາດຕາ 30 ການລາຍງານ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງລາຍງານ ຕໍ່ສຳນັກງານຂໍ້ມູນຕ້ານການຟອກເງິນ ໃນກໍລະນີລູກຄ້າສະເໜີເຮັດທຸລະກຳ ດັ່ງນີ້:

1. ທຸລະກຳເງິນສົດ ທີ່ມີມູນຄ່າເກີນກຳນົດ;
2. ທຸລະກຳໂອນເງິນ ທີ່ມີມູນຄ່າເກີນກຳນົດ;
3. ທຸລະກຳອື່ນຕາມການກຳນົດຂອງສຳນັກງານຂໍ້ມູນຕ້ານການຟອກເງິນ.

ທະນາຄານ ແຫ່ງ ສປປ ລາວ ເປັນຜູ້ກຳນົດມູນຄ່າຂອງ ທຸລະກຳເງິນສົດ, ທຸລະກຳໂອນເງິນ ທີ່ຕ້ອງລາຍງານ ແລະ ອອກນິຕິກຳກ່ຽວກັບການລາຍງານ.

**ມາດຕາ 31 ການລາຍງານທຸລະກຳທີ່ສົງໄສ**

ໃນກໍລະນີທີ່ມີຂໍ້ສົງໄສ ຫຼື ສາເຫດພາໃຫ້ສົງໄສວ່າທຸລະກຳຂອງລູກຄ້າອາດແມ່ນຜົນຈາກການກະທຳຜິດຕົ້ນ, ພົວພັນ ຫຼື ເຊື່ອມໂຍງກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງລາຍງານທຸລະກຳດັ່ງກ່າວ ຕໍ່ສຳນັກງານຂໍ້ມູນຕ້ານການຟອກເງິນ ພາຍໃນ ສາມວັນ ລັດຖະການ ລວມທັງຄວາມພະຍາຍາມໃນການເຮັດທຸລະກຳຂອງລູກຄ້າທີ່ສຳເລັດ ຫຼື ບໍ່ສຳເລັດ ໂດຍບໍ່ຈຳກັດຈຳນວນເງິນ.

**ມາດຕາ 32 ການຮັກສາຄວາມລັບຂອງການລາຍງານ**

ຜູ້ບໍລິຫານ ແລະ ພະນັກງານຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງຮັກສາຄວາມລັບກ່ຽວກັບການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຫຼື ຂໍ້ມູນຕ່າງໆ ທີ່ໄດ້ລາຍງານ ຕໍ່ສຳນັກງານຂໍ້ມູນຕ້ານການຟອກເງິນ.

ການຮັກສາຄວາມລັບຂອງລູກຄ້າ ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບພາຍໃນ ຫຼື ສັນຍາໃດໜຶ່ງຂອງຕົນ ຕ້ອງໃຫ້ສອດຄ່ອງກັບກົດໝາຍສະບັບນີ້.

ຜູ້ບໍລິຫານ ແລະ ພະນັກງານ ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ຈະບໍ່ຖືກລົງວິໄນ ຫຼື ດຳເນີນຄະດີ ໃນສະຖານການເປີດເຜີຍຄວາມລັບຂອງລູກຄ້າ ຖ້າການລາຍງານ ຫຼື ການສະໜອງຂໍ້ມູນນັ້ນ ຫາກເຮັດດ້ວຍຄວາມບໍລິສຸດໃຈ, ສອດຄ່ອງກັບກົດໝາຍສະບັບນີ້ ແລະ ຈະບໍ່ມີຄວາມຮັບຜິດຊອບທາງກົດໝາຍແຕ່ຢ່າງໃດ.

## ໝວດທີ 3
## ພັນທະໃນການແຈ້ງເງິນສົດ, ວັດຖຸມີຄ່າ ຫຼື ເຄື່ອງມືທາງດ້ານການເງິນ

### ມາດຕາ 33 ການແຈ້ງເງິນສົດ, ວັດຖຸມີຄ່າ ຫຼື ເຄື່ອງມືທາງດ້ານການເງິນ ຢູ່ດ່ານພາສີຊາຍແດນ

ບຸກຄົນທີ່ນຳ ເງິນສົດ, ວັດຖຸມີຄ່າ ຫຼື ເຄື່ອງມືທາງດ້ານການເງິນ ເຂົ້າ ແລະ ອອກ ສປປ ລາວ ຊຶ່ງມີມູນຄ່າເກີນລະບຽບການທີ່ທະນາຄານ ແຫ່ງ ສປປ ລາວ ວາງອອກໃນແຕ່ລະໄລຍະ ຕ້ອງແຈ້ງຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານພາສີຊາຍແດນ ຫຼັງຈາກນັ້ນເຈົ້າໜ້າທີ່ດັ່ງກ່າວ ຕ້ອງລາຍງານຕໍ່ສຳນັກງານຂໍ້ມູນຕ້ານການຟອກເງິນ.

### ມາດຕາ 34 ການກວດກາຂອງເຈົ້າໜ້າທີ່ພາສີປະຈຳດ່ານພາສີຊາຍແດນ

ເຈົ້າໜ້າທີ່ພາສີປະຈຳດ່ານພາສີຊາຍແດນ ມີໜ້າທີ່ກວດກາຄວາມຖືກຕ້ອງກ່ຽວກັບການແຈ້ງເງິນສົດ, ວັດຖຸມີຄ່າ ຫຼື ເຄື່ອງມືທາງດ້ານການເງິນ ຂອງບຸກຄົນທີ່ ເຂົ້າ-ອອກ ສປປ ລາວ ຕາມລະບຽບກົດໝາຍ.

ໃນກໍລະນີທີ່ເຈົ້າໜ້າທີ່ພາສີປະຈຳດ່ານພາສີຊາຍແດນ ຫາກກວດເຫັນ, ພົບເຫັນ ຫຼື ມີຂໍ້ສົງໄສວ່າເງິນສົດ, ວັດຖຸມີຄ່າ ຫຼື ເຄື່ອງມືທາງດ້ານການເງິນ ທີ່ບໍ່ໄດ້ແຈ້ງ ຫຼື ມີການແຈ້ງຂໍ້ມູນເທັດ ທີ່ກ່ຽວຂ້ອງກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕ້ອງຍຶດ ຫຼື ກັກໄວ້ ໃນທັນທີ ແລ້ວລາຍງານຕໍ່ສຳນັກງານຂໍ້ມູນຕ້ານການຟອກເງິນ ແລະ ເປີດການສືບສວນ-ສອບສວນ ເພື່ອໃຫ້ຮູ້ໄດ້ທີ່ມາຂອງເງິນສົດ, ວັດຖຸມີຄ່າ ຫຼື ເຄື່ອງມືທາງດ້ານການເງິນນັ້ນ.

ໃນກໍລະນີຫາກມີການແຈ້ງ ບໍ່ຖືກຕ້ອງ, ບໍ່ຄົບຖ້ວນຕາມຈຳນວນຕົວຈິງ, ບໍ່ແຈ້ງ ຫຼື ແຈ້ງຂໍ້ມູນເທັດ ກ່ຽວກັບເງິນສົດ, ວັດຖຸມີຄ່າ ຫຼື ເຄື່ອງມືທາງດ້ານການເງິນ ໃນເວລາ ເຂົ້າ-ອອກ ສປປ ລາວ ຈະຖືກປັບໃໝຕາມລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 4
## ການເຄື່ອນໄຫວ ຂອງນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ອົງການທີ່ບໍ່ຫວັງຜົນກຳໄລ

### ມາດຕາ 35 ການເຄື່ອນໄຫວຂອງ ນິຕິບຸກຄົນ ຫຼື ການຈັດຕັ້ງ

ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດ ຢູ່ ສປປ ລາວ ຕ້ອງປະຕິບັດຕາມກົດໝາຍສະບັບນີ້ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງຢ່າງເຂັ້ມງວດ ເພື່ອຮັບປະກັນການເຄື່ອນໄຫວຂອງຕົນບໍ່ໃຫ້ຕົກເປັນເຄື່ອງມືຂອງການຟອກເງິນ ແລະ ເປັນແຫຼ່ງຂອງການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

**ມາດຕາ 36 ການເຄື່ອນໄຫວຂອງ ອົງການທີ່ບໍ່ຫວັງຜົນກຳໄລ**

ອົງການທີ່ບໍ່ຫວັງຜົນກຳໄລ ທີ່ສ້າງຕັ້ງ ຫຼື ເຄື່ອນໄຫວ ຢູ່ ສປປ ລາວ ຕ້ອງປະຕິບັດຕາມກົດໝາຍສະບັບນີ້ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ ແລະ ໄດ້ຮັບການຕິດຕາມ ກວດກາ ຢ່າງເປັນປົກກະຕິ ເພື່ອບໍ່ໃຫ້ຕົກເປັນເຄື່ອງມືຂອງການຟອກເງິນ ແລະ ເປັນແຫຼ່ງຂອງການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

**ມາດຕາ 37 ຄວາມໂປ່ງໃສຂອງນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ອົງການທີ່ບໍ່ຫວັງຜົນກຳໄລ**

ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ອົງການທີ່ບໍ່ຫວັງຜົນກຳໄລ ຕ້ອງເຄື່ອນໄຫວຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ໂດຍສະເພາະໃນການສະໜອງຂໍ້ມູນກ່ຽວກັບຜູ້ໄດ້ຮັບກຳມະສິດ, ຜົນປະໂຫຍດທີ່ແທ້ຈິງ ແລະ ຂໍ້ມູນກ່ຽວກັບໂຄງສ້າງດ້ານການຄຸ້ມຄອງພາຍໃນຂອງຕົນ ດ້ວຍຄວາມໂປ່ງໃສ ແລະ ຮັບປະກັນຄວາມຊັດເຈນ, ຄົບຖ້ວນ ແລະ ຖືກຕ້ອງ ຕາມແຕ່ລະໄລຍະ.

ອົງການທີ່ອອກໃບອະນຸຍາດໃຫ້ແກ່ ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ອົງການທີ່ບໍ່ຫວັງຜົນກຳໄລດັ່ງກ່າວ ຕ້ອງເກັບຮັກສາຂໍ້ມູນເຫຼົ່ານັ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 28 ຂອງກົດໝາຍສະບັບນີ້.

ອົງການສືບສວນ-ສອບສວນ, ອົງການຄຸ້ມຄອງຫົວໜ່ວຍທີ່ມີໜ້າທີ່ລາຍງານ, ສຳນັກງານຂໍ້ມູນຕ້ານການຟອກເງິນ, ອົງການອື່ນທີ່ມີ ສິດ ແລະ ໜ້າທີ່ກ່ຽວຂ້ອງ ສາມາດເຂົ້າເຖິງຂໍ້ມູນດັ່ງກ່າວໄດ້ທຸກເວລາ.

## ໝວດທີ 5
## ມາດຕະການຊົ່ວຄາວ

**ມາດຕາ 38 ການນຳໃຊ້ມາດຕະການຊົ່ວຄາວ**

ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີສິດນຳໃຊ້ມາດຕະການຊົ່ວຄາວ ໃນການ ຍຶດ ຫຼື ອາຍັດ ທຶນ ໃນກໍລະນີ ກວດພົບ, ພົບເຫັນ ຫຼື ສົງໄສວ່າມີການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

ການນຳໃຊ້ມາດຕະການຊົ່ວຄາວນັ້ນ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ຂອງ ສປປ ລາວ ພ້ອມທັງຮັບປະກັນສິດ ຜົນປະໂຫຍດຂອງບຸກຄົນທີສາມ ແລະ ບໍ່ໃຫ້ມີຜົນສະທ້ອນເຖິງການເຄື່ອນໄຫວຢ່າງເປັນປົກກະຕິຂອງລະບົບການເງິນ-ເງິນຕາ.

ຂັ້ນຕອນການຈັດຕັ້ງປະຕິບັດມາດຕະການຊົ່ວຄາວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 39 ການອາຍັດໂດຍບໍ່ແຈ້ງເຕືອນລ່ວງໜ້າ**

ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີສິດອາຍັດທຶນ ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໂດຍບໍ່ມີການແຈ້ງເຕືອນລ່ວງໜ້າ ເພື່ອບໍ່ໃຫ້ມີການໂອນ ຫຼື ສິ່ງຕໍ່ ໃຫ້ຜູ້ກໍ່ການຮ້າຍ.

**ມາດຕາ 40 ການຍຶດ, ການອາຍັດ ທຶນ ຂອງຜູ້ກໍ່ການຮ້າຍ**

ທຶນ ຂອງຜູ້ກໍ່ການຮ້າຍ, ບຸກຄົນ ແລະ ນິຕິບຸກຄົນ ລວມທັງກຸ່ມຄົນທີ່ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ອົງການຈັດຕັ້ງ ຂອງຜູ້ກໍ່ການຮ້າຍສາກົນ ທີ່ໄດ້ກຳນົດໄວ້ໃນຍັດຕິ S/RES/1267 ປີ 1999, S/RES/1373 ປີ 2001 ແລະ ຍັດຕິອື່ນທີ່ກ່ຽວຂ້ອງ ຂອງສະພາຄວາມໝັ້ນຄົງ ອົງການສະຫະປະຊາຊາດ ຕ້ອງຖືກຍຶດ, ອາຍັດ ໃນທັນທີ.

ຂັ້ນຕອນການຈັດຕັ້ງປະຕິບັດໃນການຍຶດ, ອາຍັດ ທຶນຂອງຜູ້ກໍ່ການຮ້າຍ ໃຫ້ປະຕິບັດຕາມນິຕິກຳສະເພາະ.

**ມາດຕາ 41 ການຮິບທຶນ**

ໃນກໍລະນີ ທີ່ມີຂໍ້ມູນຫຼັກຖານພຽງພໍກ່ຽວກັບ ທຶນ ທີ່ກ່ຽວຂ້ອງກັບການກະທຳຜິດຕົ້ນ, ການຟອກເງິນ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ການເຂົ້າຮ່ວມໃນແຕ່ລະການກະທຳຜິດ ສານຕ້ອງລົງຄຳຕັດສິນໃຫ້ຮິບ ທຶນ ດັ່ງນີ້:

1. ທຶນ ທີ່ເປັນຜົນຈາກການກະທຳຜິດຕົ້ນ ລວມທັງຊັບສິນທີ່ໄດ້ຈາກການລົງທຶນ ຫຼື ໄດ້ຮັບຈາກການແລກປ່ຽນ ຫຼື ມູນຄ່າຂອງຊັບສິນທີ່ກ່ຽວຂ້ອງກັບການເຄື່ອນໄຫວດັ່ງກ່າວ;
2. ທຶນ ທີ່ຈະນຳໃຊ້ເຂົ້າໃນການກະທຳຜິດ ດັ່ງກ່າວ;
3. ທຶນ ແລະ ຜົນປະໂຫຍດອື່ນ ທີ່ເປັນລາຍໄດ້ຈາກ ທຶນ ຂອງການກໍ່ອາຊະຍາກຳ;
4. ເຄື່ອງມືທາງດ້ານການເງິນທີ່ກ່ຽວຂ້ອງກັບການກະທຳຜິດ;
5. ທຶນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ 1 ຫາ 4 ທີ່ໄດ້ມີການໂອນກຳມະສິດໃຫ້ບຸກຄົນໃດໜຶ່ງແລ້ວ. ຍົກເວັ້ນກໍລະນີທີ່ສານເຫັນວ່າເຈົ້າຂອງທຶນ ນັ້ນ ຫາກໄດ້ມາຈາກການຊື້-ຂາຍຢ່າງຖືກຕ້ອງ ຫຼື ໄດ້ກຳມະສິດໂດຍຖືກຕ້ອງຕາມກົດໝາຍ.

ຄຳຕັດສິນຂອງສານ ທີ່ບອກວ່າໃຫ້ຮິບ ທຶນ ນັ້ນ ຕ້ອງບົ່ງບອກ ລັກສະນະ, ຈຳນວນ, ມູນຄ່າ ແລະ ລາຍລະອຽດອື່ນທີ່ຈຳເປັນ ຂອງທຶນດັ່ງກ່າວ.

## ພາກທີ III
## ການຮ່ວມມືສາກົນໃນການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

**ມາດຕາ 42 ຫຼັກການຮ່ວມມືສາກົນ**

ການຮ່ວມມືສາກົນໃນການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ລະຫວ່າງອົງການທີ່ມີສິດອຳນາດຂອງ ສປປ ລາວ ແລະ ຕ່າງປະເທດ ໃຫ້ປະຕິບັດຕາມຫຼັກການເຄົາລົບເອກະລາດ, ອຳນາດອະທິປະໄຕ ແລະ ພື້ນແຜ່ນດິນອັນຄົບຖ້ວນຂອງຊາດ, ບໍ່

ແຊກແຊງເຂົ້າໃນວຽກງານຂອງກັນ ແລະ ກັນ, ສະເໝີພາບ, ຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ສອດຄ່ອງກັບ ສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 43 ເນື້ອໃນການຮ່ວມມືສາກົນ**

ການຮ່ວມມືສາກົນໃນການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ປະຕິບັດຕາມເນື້ອໃນ ດັ່ງນີ້:

1. ເກັບກຳ, ຄົ້ນຄວ້າ ແລະ ແລກປ່ຽນຂໍ້ມູນຂ່າວສານ, ເຕັກໂນໂລຊີ ແລະ ບົດຮຽນກ່ຽວກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
2. ເຊັນສັນຍາຮ່ວມມືກັບຕ່າງປະເທດ ຫຼື ເຂົ້າຮ່ວມເປັນພາຄີສົນທິສັນຍາ ແລະ ສັນຍາສາກົນ ໃນການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
3. ຊ່ວຍເຫຼືອຊຶ່ງກັນ ແລະ ກັນໃນການບຳລຸງ ສ້າງພະນັກງານທາງດ້ານວິຊາການ ແລະ ການຝຶກອົບຮົມ ເພື່ອຍົກສູງຄວາມອາດສາມາດໃຫ້ແກ່ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
4. ປະຕິບັດຕາມ ສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 44 ການຊ່ວຍເຫຼືອຊຶ່ງກັນ ແລະ ກັນ ທາງກົດໝາຍ**

ການຊ່ວຍເຫຼືອຊຶ່ງກັນ ແລະ ກັນ ທາງກົດໝາຍ ແມ່ນໃສ່ການຮ້ອງຂໍ, ຮ່ວມມືໃນການສືບສວນ-ສອບສວນ, ການຍຶດ ແລະ ອາຍັດຊັບຂອງຜູ້ຖືກຫາ, ຈຳເລີຍ, ຜູ້ກະທຳຜິດ, ການນຳໃຊ້ມາດຕະການອື່ນທາງກົດໝາຍ, ການສົ່ງຜູ້ຮ້າຍຂ້າມແດນ, ການຂໍ ຂໍ້ມູນ ແລະ ຫຼັກຖານເພີ່ມເຕີມກ່ຽວກັບການກະທຳຜິດ.

ສຳລັບກົນໄກ ແລະ ຂັ້ນຕອນຂອງການຊ່ວຍເຫຼືອຊຶ່ງກັນ ແລະ ກັນທາງກົດໝາຍ ໃຫ້ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ.

**ມາດຕາ 45 ເນື້ອໃນຂອງການຮ້ອງຂໍການຊ່ວຍເຫຼືອຊຶ່ງກັນ ແລະ ກັນ ທາງກົດໝາຍ**

ການຮ້ອງຂໍການຊ່ວຍເຫຼືອຊຶ່ງກັນ ແລະ ກັນ ທາງກົດໝາຍ ຕ້ອງມີເນື້ອໃນ ດັ່ງນີ້:

1. ເອກະສານຢັ້ງຢືນຂອງເຈົ້າໜ້າທີ່ ຂອງລັດທີ່ຮ້ອງຂໍ;
2. ຊື່ ແລະ ນາມສະກຸນ, ໜ້າທີ່ຕຳແໜ່ງຂອງເຈົ້າໜ້າທີ່ ຂອງລັດທີ່ຮ້ອງຂໍ ຊຶ່ງດຳເນີນການສືບສວນ-ສອບສວນ, ຮ້ອງຟ້ອງ ຫຼື ພິຈາລະນາຄະດີດັ່ງກ່າວ;
3. ຊື່ ແລະ ນາມສະກຸນ, ໜ້າທີ່ຕຳແໜ່ງ ຂອງເຈົ້າໜ້າທີ່ ຂອງລັດທີ່ຖືກຮ້ອງຂໍ ຊຶ່ງດຳເນີນການສືບສວນ-ສອບສວນ, ຮ້ອງຟ້ອງ ຫຼື ພິຈາລະນາຄະດີ ດັ່ງກ່າວ;
4. ຈຸດປະສົງ ແລະ ຄວາມຈຳເປັນໃນການຮ້ອງຂໍ;
5. ສະພາບຄວາມເປັນຈິງ ໃນການຮ້ອງຂໍ;

6. ລາຍລະອຽດທີ່ຈຳເປັນ ເພື່ອສ້າງຄວາມສະດວກໃນການໃຫ້ການຊ່ວຍເຫຼືອ ເປັນຕົ້ນ ຊື່ ແລະ ນາມສະກຸນ, ສະຖານະພາບ, ສັນຊາດ, ທີ່ຢູ່ອາໄສ, ອາຊີບ ແລະ ລາຍລະອຽດອື່ນທີ່ຈຳເປັນ;

7. ຂໍ້ມູນທີ່ສຳຄັນ ສຳລັບການຢັ້ງຢືນ ແລະ ຕິດຕາມບຸກຄົນ, ທຶນ, ການນຳໃຊ້ມາດຕະການ ຊົ່ວຄາວ ຕາມການຮ້ອງຂໍ;

8. ບ່ອນອີງທາງດ້ານນິຕິກຳ ຕໍ່ການກະທຳຜິດຂອງຜູ້ຖືກຫາ ແລະ ຜູ້ຖືກສົງໄສ.

ນອກຈາກນີ້ ການຊ່ວຍເຫຼືອຊຶ່ງກັນ ແລະ ກັນ ທາງກົດໝາຍ ຍັງຕ້ອງປະຕິບັດຕາມເນື້ອໃນແຕ່ລະກໍລະນີ ດັ່ງນີ້:

1. ການຮ້ອງຂໍໃຫ້ນຳໃຊ້ມາດຕະການຊົ່ວຄາວ ຕ້ອງອະທິບາຍລາຍລະອຽດກ່ຽວກັບມາດຕະການທີ່ຮ້ອງຂໍນັ້ນ;

2. ການຮ້ອງຂໍ ໃຫ້ມີການອອກຄຳສັ່ງຍຶດ ຫຼື ອາຍັດ ທຶນ ຕ້ອງລາຍງານກ່ຽວກັບສະພາບຄວາມເປັນຈິງທີ່ກ່ຽວຂ້ອງ ແລະ ຂໍ້ຂັດແຍ່ງທີ່ເປັນປະໂຫຍດ ຫຼື ເປັນຂໍ້ມູນຫຼັກຖານທີ່ໜັກແໜ້ນໃຫ້ແກ່ການພິຈາລະນາຂອງພະນັກງານ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ.

ເອກະສານປະກອບສຳນວນການຮ້ອງຂໍໃຫ້ມີການບັງຄັບໃຊ້ ຄຳສັ່ງ ຍຶດ ຫຼື ອາຍັດ ທຶນ ມີດັ່ງນີ້:

1) ສຳເນົາ ຄຳສັ່ງ, ບົດລາຍງານເຫດການ ແລະ ຄວາມເປັນມາກ່ຽວກັບການອອກຄຳສັ່ງ;

2) ຄຳສັ່ງດັ່ງກ່າວມີຜົນສັກສິດ ແລະ ໃຊ້ໄດ້ຢ່າງເດັດຂາດ;

3) ເອກະສານຂໍ້ມູນທີ່ພົວພັນເຖິງການທວງເອົາທຶນ ຂອງບຸກຄົນທີສາມ ທີ່ຖືກຍຶດ ຫຼື ອາຍັດ ຖ້າຫາກມີຄວາມຈຳເປັນ.

ໃນກໍລະນີ ມີການຮ້ອງຂໍກ່ຽວກັບການສົ່ງຜູ້ຮ້າຍຂ້າມແດນ ຖ້າບຸກຄົນດັ່ງກ່າວ ຫາກໄດ້ຖືກສານຕັດສິນລົງໂທດແລ້ວ ກໍສາມາດສະໜອງຄຳຕັດສິນນັ້ນ ໃຫ້ຕາມການຮ້ອງຂໍ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງກັບຄະດີ, ຂໍ້ບັນຍັດຂອງກົດໝາຍ ທີ່ເປັນພື້ນຖານໃຫ້ແກ່ການຕັດສິນ ແລະ ໂທດທີ່ຍັງເຫຼືອ.

**ມາດຕາ 46 ການທວງເອົາຂໍ້ມູນເພີ່ມເຕີມ**

ຫົວໜ້າອົງການໄອຍະການປະຊາຊົນ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງລັດ ສາມາດທວງເອົາຂໍ້ມູນເພີ່ມເຕີມ ຈາກລັດທີ່ຮ້ອງຂໍໄດ້ ຖ້າຫາກມີຄວາມຈຳເປັນ ໃນການອຳນວຍຄວາມສະດວກໃຫ້ແກ່ການດຳເນີນການ ຕາມການຮ້ອງຂໍ ການຊ່ວຍເຫຼືອຊຶ່ງກັນ ແລະ ກັນ ທາງກົດໝາຍ.

**ມາດຕາ 47 ການຮັກສາຄວາມລັບ**

ອົງການທີ່ມີສິດອຳນາດຂອງ ສປປ ລາວ ຕ້ອງຮັບປະກັນການຮັກສາຄວາມລັບຂອງ ການຮ້ອງຂໍຈາກລັດທີ່ກ່ຽວຂ້ອງ.

**ມາດຕາ 48 ການແຈ້ງການຊັກຊ້າ**

ໃນກໍລະນີ ການນໍາໃຊ້ມາດຕາການຊົ່ວຄາວ ຫຼື ການສືບສວນ-ສອບສວນ ຂອງການດໍາເນີນການຕາມການຮ້ອງຂໍການຊ່ວຍເຫຼືອຊຶ່ງກັນ ແລະ ກັນທາງກົດໝາຍ ຫາກມີການຊັກຊ້າ ຫຼື ຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດນັ້ນ ກໍຄວນແຈ້ງສາເຫດຂອງການຊັກຊ້າ ຫຼື ໃຫ້ຄໍາແນະນໍາແກ່ເຈົ້າໜ້າທີ່ກ່ຽວຂ້ອງຂອງລັດທີ່ຮ້ອງຂໍ.

**ມາດຕາ 49 ການປະຕິເສດການຮ້ອງຂໍ**

ອົງການທີ່ມີສິດອໍານາດ ຂອງ ສປປ ລາວ ອາດຈະປະຕິເສດການຮ້ອງຂໍຕາມທີ່ໄດ້ກໍານົດໄວ້ໃນມາດຕາ 43 ແລະ 44 ຂອງກົດໝາຍສະບັບນີ້ ຖ້າຫາກການຮ້ອງຂໍນັ້ນ ບໍ່ສອດຄ່ອງກັບມາດຕາ 42 ຂອງກົດໝາຍສະບັບນີ້.

## ພາກທີ IV
## ຂໍ້ຫ້າມ

**ມາດຕາ 50 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ກ່ຽວກັບວຽກງານຕ້ານ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ດັ່ງນີ້:

1. ພົວພັນ ຫຼື ເຂົ້າຮ່ວມ ກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
2. ພົວພັນທຸກຮູບແບບ ຫຼື ໃຫ້ການຊ່ວຍເຫຼືອແກ່ຜູ່ຟອກເງິນ ແລະ ຜູ່ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
3. ເປັນສື່ກາງ, ໃຫ້ສິນບົນແກ່ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
4. ປອມແປງ ເອກະສານ ແລະ ຕາປະທັບ;
5. ປົດບັງ, ຊຸກເຊື່ອງ, ນາບຂູ່, ກົດໜ່ວງ ຖ່ວງດຶງ ແລະ ຂັດຂວາງການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
6. ເປີດ ຫຼື ນໍາໃຊ້ ບັນຊີນິລະນາມ ຫຼື ໃສ່ຊື່ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ບໍ່ມີຕົວຕົນ;
7. ມີພຶດຕິກໍາອື່ນທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 51 ຂໍ້ຫ້າມ ສໍາລັບພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກໍາ ກ່ຽວກັບວຽກງານຕ້ານ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່ ແລະ ຕໍາແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບ ນາບຂູ່ ເພື່ອຜົນປະໂຫຍດສ່ວນຕົວ;
2. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບ ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ບໍ່ມີສ່ວນກ່ຽວຂ້ອງ;
3. ສົມຮູ້ຮ່ວມຄິດ, ຂໍເອົາ, ທວງເອົາ ຫຼື ຮັບສິນບົນ;
4. ເມີນເສີຍຕໍ່ໜ້າທີ່ຮັບຜິດຊອບຂອງຕົນ ຫຼື ກົດໜ່ວງ ຖ່ວງດຶງເອກະສານ;
5. ມີພຶດຕິກໍາອື່ນທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 52 ຂໍ້ຫ້າມ ສໍາລັບຫົວໜ່ວຍທີ່ມີໜ້າທີ່ລາຍງານ**

ຫ້າມ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ມີ ພຶດຕິກໍາ ກ່ຽວກັບວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ດັ່ງນີ້:

1. ພົວພັນກັບ ທະນາຄານ ຫຼື ສະຖາບັນການເງິນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ບໍ່ມີຕົວຕົນ;
2. ພົວພັນກັບທະນາຄານຢູ່ປະເທດທີ່ບໍ່ມີລະບຽບກົດໝາຍກ່ຽວກັບການຕ້ານ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
3. ເປີດບັນຊີນິລະນາມ;
4. ເຮັດທຸລະກິດ ຫຼື ທຸລະກໍາ ກັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນອນຢູ່ໃນມະຕິຂອງສະພາຄວາມໝັ້ນຄົງ ອົງການສະຫະປະຊາຊາດ;
5. ມີພຶດຕິກໍາອື່ນທີ່ເປັນການລະເມີດລະບຽບກົດໝາຍ.

## ພາກທີ V

## ການຄຸ້ມຄອງ ແລະ ການກວດກາວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

### ໝວດທີ 1

### ການຄຸ້ມຄອງ

**ມາດຕາ 53 ອົງການຄຸ້ມຄອງວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້

ຄະນະກຳມະການແຫ່ງຊາດ ເພື່ອຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ຄຕຟງ) ຮັບຜິດຊອບໂດຍກົງ ໃນການຄຸ້ມຄອງ, ຕິດຕາມ ບົນພື້ນຖານການປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແມ່ນ ຄຕຟງ ຊຶ່ງມີພາລະບົດບາດເປັນເສນາທິການ ໃຫ້ລັດຖະບານໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ແລະ ມາດຕະຖານສາກົນທີ່ກ່ຽວຂ້ອງກັບວຽກງານນີ້ ໃຫ້ໄດ້ຮັບຜົນດີ.

ຄຕຟງ ເປັນການຈັດຕັ້ງບໍ່ປະຈຳການ, ປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການຈຳນວນໜຶ່ງ ຊຶ່ງຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ.

ຄຕຟງ ມີສຳນັກງານຂໍ້ມູນຕ້ານການຟອກເງິນເປັນເສນາທິການ ທັງເປັນກອງເລຂາ.

ຮອງນາຍົກລັດຖະມົນຕີ ເປັນປະທານ ຄຕຟງ, ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ເປັນຮອງປະທານຜູ້ທີໜຶ່ງ ທັງເປັນຜູ້ປະຈຳການ, ລັດຖະມົນຕີຊ່ວຍວ່າການກະຊວງປ້ອງກັນຄວາມສະຫງົບເປັນຮອງປະທານຜູ້ທີສອງ ແລະ ລັດຖະມົນຕີຊ່ວຍວ່າການ ຫຼື ຮອງຫົວໜ້າອົງການອື່ນທີ່ກ່ຽວຂ້ອງ ເປັນກຳມະການ.

ໂຄງປະກອບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄຕຟງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 54 ສິດ ແລະ ໜ້າທີ່ ຂອງ ຄຕຟງ**

ຄຕຟງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ, ປັບປຸງ ແຜນຍຸດທະສາດແຫ່ງຊາດ, ນະໂຍບາຍ ແລະ ລະບຽບກົດໝາຍ ກ່ຽວກັບການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເພື່ອນຳສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍແຜນຍຸດທະສາດແຫ່ງຊາດ, ນະໂຍບາຍ ແລະ ລະບຽບກົດໝາຍກ່ຽວກັບການຕ້ານ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເປັນແຜນການ, ແຜນງານ ແລະ ໂຄງການ ພ້ອມທັງຈັດຕັ້ງປະຕິບັດໃນແຕ່ລະໄລຍະ ໂດຍໃຫ້ສອດຄ່ອງກັບມາດຕະຖານພາກພື້ນ ແລະ ສາກົນ;
3. ຮັບຮອງເອົາແຜນການດຳເນີນງານ ເພື່ອຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ແກ້ໄຂບັນຫາຄົງຄ້າງຕ່າງໆ ຂອງລະບົບຕ້ານ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
4. ຊີ້ນຳ, ຊຸກຍູ້, ຄຸ້ມຄອງ, ຕິດຕາມ ການຈັດຕັ້ງປະຕິບັດ ແລະ ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນງານແຫ່ງຊາດ ແລະ ລະບຽບກົດໝາຍ ກ່ຽວກັບການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງສຳນັກງານຂໍ້ມູນຕ້ານການຟອກເງິນ, ອົງການຄຸ້ມຄອງ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;

5. ບຳລຸງ ສ້າງ ແລະ ຍົກລະດັບ ພະນັກງານ ກ່ຽວກັບການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

6. ນຳໃຊ້ມາດຕະການທາງບໍລິຫານຕໍ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້;

7. ປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນຂອບເຂດທົ່ວປະເທດ;

8. ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

9. ສະຫຼຸບ ແລະ ລາຍງານວຽກງານຂອງຕົນ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍ ຂອງລັດຖະບານ.

## ມາດຕາ 55 ສຳນັກງານຂໍ້ມູນຕ້ານການຟອກເງິນ

ສຳນັກງານຂໍ້ມູນຕ້ານການຟອກເງິນ ແມ່ນ ການຈັດຕັ້ງໜຶ່ງໃນກົງຈັກການຈັດຕັ້ງ ຂອງທະນາຄານ ແຫ່ງ ສປປ ລາວ ແລະ ມີຄວາມເປັນເອກະລາດທາງດ້ານການເຄື່ອນໄຫວວຽກງານວິຊາສະເພາະ.

ສຳນັກງານຂໍ້ມູນຕ້ານການຟອກເງິນ ມີພາລະບົດບາດຕົ້ນຕໍ ໃນການເກັບກຳຂໍ້ມູນ, ວິເຄາະ, ເຜີຍແຜ່, ປະສານງານ ກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

ສຳນັກງານຂໍ້ມູນຕ້ານການຟອກເງິນ ນຳໃຊ້ງົບປະມານຂອງທະນາຄານ ແຫ່ງ ສປປ ລາວ.

ໂຄງປະກອບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສຳນັກງານຂໍ້ມູນຕ້ານການຟອກເງິນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ມາດຕາ 56 ລະບອບແບບແຜນວິທີເຮັດວຽກ

ຄຕຟງ ເຄື່ອນໄຫວວຽກງານຕາມລະບອບປະຊຸມ. ກອງປະຊຸມຂອງ ຄຕຟງ ປະກອບດ້ວຍ ກອງປະຊຸມສາມັນ ແລະ ວິສາມັນ.

ກອງປະຊຸມສາມັນເປີດຂຶ້ນ ສາມເດືອນຕໍ່ຄັ້ງ ໂດຍມີສະມາຊິກເຂົ້າຮ່ວມຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກທັງໝົດ.

ກອງປະຊຸມວິສາມັນ ສາມາດເປີດຂຶ້ນເວລາໃດກໍໄດ້ ຖ້າຫາກມີຄວາມຈຳເປັນຕາມການຮຽກໂຮມຂອງປະທານ ຄຕຟງ ຫຼື ຕາມການສະເໜີຂອງກຳມະການຫຼາຍກວ່າເຄິ່ງໜຶ່ງ.

ກອງປະຊຸມ ຄຕຟງ ຕົກລົງບັນຫາ ໂດຍຖືເອົາຕາມສຽງສ່ວນຫຼາຍຂອງສະມາຊິກ ທີ່ເຂົ້າຮ່ວມກອງປະຊຸມ. ໃນກໍລະນີ ຫາກມີສຽງເທົ່າກັນ ສຽງຂອງປະທານ ຄຕຟງ ເປັນອັນຕັດສິນ.

## ໝວດທີ 2
## ການກວດກາ

### ມາດຕາ 57 ອົງການກວດກາວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ອົງການກວດກາວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 53 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ອົງການກວດກາ ລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ປະຊາຊົນ.

### ມາດຕາ 58 ເນື້ອໃນການກວດກາ

ການກວດກາວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;
2. ການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຂອງພະນັກງານ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ.

### ມາດຕາ 59 ຮູບການການກວດກາ

ການກວດກາວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຢ່າງເປັນລະບົບປົກກະຕິ ແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາຢ່າງແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການດຳເນີນການກວດກາວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເຈົ້າໜ້າທີ່ຂອງອົງການກວດກາ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບຽບກົດໝາຍຢ່າງເຂັ້ມງວດ.

## ພາກທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 60 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການໃຫ້ການຮ່ວມມື, ການລາຍງານ ຫຼື ສະໜອງຂໍ້ມູນກ່ຽວກັບພຶດຕິກຳ ຫຼື ການເຄື່ອນໄຫວ ທີ່ສົງໄສວ່າເປັນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 61 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ ຫຼື ລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ລວມທັງການໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

### ມາດຕາ 62 ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍບໍ່ຫຼວງຫຼາຍ ເປັນຕົ້ນ ລາຍງານຊັກຊ້າ ກ່ຽວກັບທຸລະກຳທີ່ສົງໄສ, ບໍ່ຮັກສາຄວາມລັບ ຂອງການລາຍງານທຸລະກຳທີ່ສົງໄສ ຈະຖືກສຶກສາອົບຮົມ ຫຼື ກ່າວເຕືອນ.

### ມາດຕາ 63 ມາດຕະການທາງວິໄນ

ເຈົ້າໜ້າທີ່ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍບໍ່ຫຼວງຫຼາຍ ແຕ່ບໍ່ມີຄວາມຈິງໃຈລາຍງານ, ຫຼົບຫຼີກຈາກຄວາມຜິດຂອງຕົນ ຈະຖືກລົງວິໄນຕາມແຕ່ລະກໍລະນີ.

**ມາດຕາ 64 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດ ຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນມາດຕາ 50, 51 ແລະ 52 ຂອງກົດໝາຍສະບັບນີ້ ຕາມແຕ່ລະກໍລະນີ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ກໍຈະຖືກປັບໃໝ.

ອັດຕາປັບໃໝໃນແຕ່ລະກໍລະນີ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 65 ມາດຕະການຕໍ່ຫົວໜ່ວຍທີ່ມີໜ້າທີ່ລາຍງານ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ມີການລະເມີດ ຫຼື ໃນກໍລະນີທີ່ບໍ່ປະຕິບັດສິດ ແລະ ພັນທະຂອງຕົນ ຕາມມາດຕາ 18 ຂອງກົດໝາຍສະບັບນີ້ ຈະຖືກ:

   1.1. ກ່າວເຕືອນເປັນລາຍລັກອັກສອນ ແລະ ໃຫ້ປະຕິບັດຕາມ ສິດ ແລະ ພັນທະຂອງຕົນ;

   1.2. ປັບໃໝຕາມທີ່ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

2. ມີການລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນມາດຕາ 50 ແລະ 52 ຂອງກົດໝາຍສະບັບນີ້ ຈະຖືກ:

   2.1. ໂຈະ ຫຼື ປົດຕຳແໜ່ງຜູ້ບໍລິຫານ;

   2.2. ຖອນໃບອະນຸຍາດດຳເນີນທຸລະກິດ ຫຼື ທະບຽນວິສາຫະກິດ;

   2.3. ດຳເນີນຄະດີອາຍາຕາມກົດໝາຍ ແລະ ປັບໃໝແຕ່ 100.000.000 ກີບ ຫາ 2.000.000.000 ກີບ.

**ມາດຕາ 66 ມາດຕະການທາງອາຍາ ຕໍ່ການຟອກເງິນ**

ບຸກຄົນທີ່ໄດ້ກະທຳຜິດໃນສະຖານການຟອກເງິນ:

1. ຕໍ່າກວ່າ 1.000.000.000 ກີບ ລົງມາ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 300.000.000 ກີບ ຫາ 500.000.000 ກີບ ແລະ ຈະຖືກຣິບຊັບ.

2. ແຕ່ 1.000.000.000 ກີບ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບແຕ່ ເຈັດປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 500.000.000 ກີບ ຫາ 700.000.000 ກີບ ແລະ ຈະຖືກຣິບຊັບ.

ໃນກໍລະນີທີ່ມີການຈັດຕັ້ງເປັນກຸ່ມ ຫຼື ມີການກະທຳຜິດເປັນອາຈິນ ຈະຖືກລົງໂທດຕັດອິດສະລະພາບແຕ່ ສິບປີ ຫາ ສິບຫ້າ ປີ ແລະ ຈະຖືກປັບໃໝ ແຕ່ 700.000.000 ກີບ ຫາ 900.000.000 ກີບ ແລະ ຈະຖືກຣິບຊັບ.

ການກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 67 ມາດຕະການທາງອາຍາ ຕໍ່ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ບຸກຄົນ ທີ່ໄດ້ກະທຳຜິດໃນສະຖານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ:

1. ຕໍ່າກວ່າ 1.000.000.000 ກີບ ລົງມາ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ແປດປີ ແລະ ຈະຖືກປັບໃໝແຕ່ 500.000.000 ກີບ ຫາ 800.000.000 ກີບ ແລະ ຈະຖືກຣິບຊັບ.

2. ແຕ່ 1.000.000.000 ກີບ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບແຕ່ ແປດປີ ຫາ ສິບສອງປີ ແລະ ຈະຖືກປັບໃໝ ແຕ່ 800.000.000 ກີບ ຫາ 1.000.000.000 ກີບ ແລະ ຈະຖືກຣິບຊັບ.

ໃນກໍລະນີທີ່ມີການຈັດຕັ້ງເປັນກຸ່ມ ຫຼື ເປັນອາຈີນ ຈະຖືກລົງໂທດຕັດອິດສະລະພາບແຕ່ ສິບຫ້າປີ ຫາ ຊາວປີ ແລະ ຈະຖືກປັບໃໝແຕ່ 800.000.000 ກີບ ຫາ 1.000.000.000 ກີບ ແລະ ຈະຖືກຣິບຊັບ.

ການກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 68 ມາດຕະການທາງອາຍາ ຕໍ່ການຊື້-ຂາຍຂໍ້ມູນພາຍໃນ ແລະ ການປັ່ນຕະຫຼາດ**

ບຸກຄົນ ທີ່ໄດ້ກະທຳຜິດໃນສະຖານການຊື້-ຂາຍຂໍ້ມູນພາຍໃນ ແລະ ການປັ່ນຕະຫຼາດ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝແຕ່ 300.000.000 ກີບ ຫາ 500.000.000 ກີບ ແລະ ຈະຖືກຣິບຊັບ.

ໃນກໍລະນີທີ່ມີການຈັດຕັ້ງເປັນກຸ່ມ, ມີການກະທຳຜິດເປັນອາຈີນ ຫຼື ກໍ່ຄວາມເສັຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 500.000.000 ກີບ ຫາ 700.000.000 ກີບ ແລະ ຈະຖືກຣິບຊັບ.

ການກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 69 ມາດຕະການທາງອາຍາ ຕໍ່ການເຂົ້າຮ່ວມໃນກຸ່ມອົງການອາຊະຍາກຳ ແລະ ກຸ່ມຄົນທີ່ເກັບຄ່າຄຸ້ມຄອງ**

ບຸກຄົນ ທີ່ໄດ້ກະທຳຜິດໃນສະຖານການເຂົ້າຮ່ວມໃນກຸ່ມອົງການອາຊະຍາກຳ ແລະ ກຸ່ມຄົນທີ່ເກັບຄ່າຄຸ້ມຄອງ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມປີ ຫາ ຫົກປີ ແລະ ຈະຖືກປັບໃໝແຕ່ 30.000.000 ກີບ ຫາ 60.000.000 ກີບ ແລະ ຈະຖືກຣິບຊັບ.

ການກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 70 ມາດຕະການທາງອາຍາ ຕໍ່ການບັງຄັບເອົາຊັບ**

ບຸກຄົນ ທີ່ໄດ້ກະທຳຜິດໃນສະຖານການບັງຄັບເອົາຊັບ ຈະຖືກລົງໂທດຕັດອິດສະລະພາບແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝແຕ່ 20.000.000 ກີບ ຫາ 50.000.000 ກີບ ແລະ ຈະຖືກ ຮິບຊັບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 71 ມາດຕະການທາງອາຍາ ຕໍ່ອາຊະຍາກຳທາງດ້ານສິ່ງແວດລ້ອມ**

ບຸກຄົນ ທີ່ໄດ້ກໍ່ອາຊະຍາກຳທາງດ້ານສິ່ງແວດລ້ອມ ຈະຖືກລົງໂທດຕາມການກະທຳຜິດໃນ ແຕ່ລະສະຖານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ ແລະ ກົດໝາຍອື່ນທີ່ກຳນົດໂທດທາງອາຍາ.

## ພາກທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 72 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດ ໝາຍສະບັບນີ້.

**ມາດຕາ 73 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິ ປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດ ຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້